ພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ, ແຕ່ຈະມີຊີວິດອັນຕະຫຼອດໄປເປັນນິດ.” ໂຢຮັນ 3:16

“ທ່ານບໍ່ໄດ້ລົງໄສໃນພຣະສັນຍາຂອງພຣະເຈົ້າດ້ວຍຄວາມບໍ່ເຊື່ອ ແຕ່ຄວາມເຊື່ອຂອງທ່ານໄດ້ເພີ້ມກຳລັງໃຫ້ແຂງແຮງຂຶ້ນ ທ່ານຈຶ່ງໄດ້ຖະຫວາຍກຽດຍິດແກ່ພຣະເຈົ້າແລະເຊື່ອເຕັມທີ່ວ່າສິ່ງນັ້ນທີ່ພຣະອົງໄດ້ສັນຍາແລ້ວ ພຣະອົງກໍ່ມີອຳນາດເຮັດໃຫ້ສຳເລັດ.” ໂຣມ 4:20-21

“ເພື່ອຈະຊົງສະແດງເຖິງຄວາມຊອບທຳຂອງພຣະອົງໃນປັດຈຸບັນ ເພື່ອໃຫ້ພຣະອົງຊົງເປັນຜູ້ຍຸດຕິທຳແລະຊົງເປັນຜູ້ທີ່ຈະຊົງໂຜດຜູ້ທີ່ເຊື່ອໃນພຣະເຢຊູເປັນຜູ້ຊອບທຳດ້ວຍ.” ໂຣມ3:23

“ດ້ວຍວ່າພວກເຮົາເຫັນວ່າຄົນໜຶ່ງຄົນໃດຈະຊົງຖືວ່າຊອບທຳໄດ້ກໍ່ໂດຍຄວາມເຊື່ອນອກຈາກການປະຕິບັດຕາມພຣະບັນຍັດ.” ໂຣມ 3:28

ທ່ານຈະຕັດສິນໃຈວ່າຢ່າງໃດ?

ຂ້າພະເຈົ້າເລືອກທີ່ຈະວາງໃຈເຊື່ອໃນພຣະເຢຊູ ຄືພຣະຜູ້ໂຜດໃຫ້ພົ້ນຂອງຂ້າພະເຈົ້າ

“ຜູ້ທີ່ເຊື່ອໃນພຣະບຸດກໍ່ບໍ່ຖືກຕັດສິນລົງໂທດ ແຕ່ຜູ້ທີ່ບໍ່ເຊື່ອກໍ່ໄດ້ຖືກຕັດສິນລົງໂທດແລ້ວ.” ໂຢຮັນ 3:18

“ເພາະວ່າມະນຸດໄດ້ເຊື່ອດ້ວຍໃຈຂອງຕົນເຖິງໄດ້ຖືວ່າເປັນຄົນຊອບທຳ ແລະຍອມດ້ວຍປາກເຖິງຄວາມພົ້ນ.” ໂຣມ10:10

“ເພາະວ່າ ທຸກຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າກໍ່ຈະພົ້ນ.” ໂຣມ 10:13

ຂ້າພະເຈົ້າເລືອກທີ່ຈະປະຕິເສດພຣະເຢຊູແລະເດີນຕາມທາງຂອງຂ້າພະເຈົ້າເອງ.

“ແຕ່ຜູ້ທີ່ບໍ່ເຊື່ອກໍ່ໄດ້ຖືກຕັດສິນລົງໂທດແລ້ວ, ເພາະວ່າບໍ່ໄດ້ເຊື່ອໃນພຣະນາມພຣະບຸດອົງດຽວທີ່ເກີດຈາກພຣະເຈົ້າ.” ໂຢຮັນ 3:18

“ຖ້າຜູ້ໃດບໍ່ມີຊື່ຈົດໄວ້ໃນທະບຽນແຫ່ງຊີວິດ ຜູ້ນັ້ນກໍ່ຖືກຖິ້ມລົງໃນບຶງໄຟ.” ພຣະນິມິດ20:15



ທັງໝົດ ເຮົາເຮັດເພື່ອທ່ານ

ເຮົາມາ...ເພາະວ່າບາບ “ຂອງທ່ານ”

“ດັ່ງມີຄຳຂຽນໄວ້ໃນພຣະຄຳພີວ່າ, ບໍ່ມີຄົນຊອບທຳຈັກຄົນໜຶ່ງຄົນດຽວ” ໂຣມ 3:10

“ດ້ວຍວ່າທຸກຄົນໄດ້ເຮັດຜິດບາບແລະຂາດຈາກພຣະລັດສະໝີຂອງພຣະເຈົ້າ.” ໂຣມ 3:23

“ຄຳນີ້ເປັນຄຳສັດຈິງແລະສົມຄວນທີ່ຄົນທັ້ງປວງຈະຮັບໄວ້, ວ່າພຣະເຢຊູຄຣິດໄດ້ສະເດັດເຂົ້າມາໃນໂລກເພື່ອຊ່ວຍຄົນບາບ.” 1 ຕີໂມທຽວ 1:15

ເຮົາຕາຍ...ເພື່ອໄຖ່ບາບ “ຂອງທ່ານ.”

“ແຕ່ທ່ານໄດ້ຮັບບາດເຈັບຍ້ອນການບາບຂອງພວກເຮົາ, ທ່ານມີຮອຍຊ້ຳເພາະຄວາມຊົ່ວຊ້າຂອງເຮົາທັ້ງຫຼາຍ. ການລົງໂທດອັນເຮັດໃຫ້ເຮົາທັ້ງຫຼາຍມີສັນຕິສຸກນັ້ນ ໄດ້ຕົກຖືກທ່ານ. ພວກເຮົາໄດ້ດີເປັນປົກກະຕິຍ້ອນການຊ້ຽນຕີທີ່ທ່ານໄດ້ຮັບເອົາ.” ເອຊາຢາ 53:5

“ແຕ່ຝ່າຍພຣະເຈົ້າຊົງສະແດງຄວາມຮັກຂອງພຣະອົງແກ່ເຮົາທັ້ງຫຼາຍ ຄືຂະນະທີ່ພວກເຮົາຍັງເປັນຄົນຜິດບາບຢູ່ນັ້ນ ພຣະຄຣິດໄດ້ຊົງຍອມສິ້ນພຣະຊົນແທນເຮົາທັ້ງຫຼາຍ. ເຫດສັນນັ້ນ ເມື່ອພວກເຮົາໄດ້ຊົງຖືວ່າເປັນຄົນຊອບທຳແລ້ວດ້ວຍພຣະໂລຫິດຂອງພຣະອົງ ຫຼາຍກ່ວານັ້ນອີກເຮົາທັ້ງຫຼາຍຈະພົ້ນຈາກພຣະພິໂລດຂອງພຣະເຈົ້າໂດຍພຣະອົງ.” ໂຣມ 5:8-9

“ໃນພຣະອົງນັ້ນ ເຮົາຈຶ່ງໄດ້ຮັບການໄຖ່ໃຫ້ພົ້ນໂດຍພຣະໂລຫິດຂອງພຣະອົງ ຄືເປັນການຍົກຜິດບາບທັ້ງຫຼາຍ.” ໂກໂລຊາຍ 1:14

ເຮົາໄດ້ເປັນຄົນມາ...ເພື່ອຮັກສາຊ່ວຍເຫຼືອເຈົ້າໄວ້ຕະຫຼອດໄປເປັນນິດ.

“ດ້ວຍເຫດນີ້ ພຣະອົງຈຶ່ງຊົງສາມາດເປັນນິດ ທີ່ຈະຊ່ວຍຄົນທັ້ງປວງທີ່ໄດ້ເຂົ້າມາເຖິງພຣະເຈົ້າໂດຍທາງພຣະອົງນັ້ນໃຫ້ໄດ້ຮັບຄວາມລອດພົ້ນ ເພາະວ່າພຣະອົງຊົງພຣະຊົນຢູ່ເປັນນິດ ເພື່ອຊ່ວຍທູນຂໍພຣະກະລຸນາໃຫ້ຄົນເຫຼົ່ານັ້ນ.” ເຮັບເຣີ 7:25

“ແກ່ນຂອງເຮົາກໍ່ຟັງສຽງຂອງເຮົາ ແລະເຮົາກໍ່ຮູ້ຈັກຝູງແກ່ນັ້ນແລະເຂົາຕາມເຮົາໄປ. ແລະຝ່າຍເຮົາກໍ່ປະທານຊີວິດອັນຕະຫຼອດໄປເປັນນິດໃຫ້ແກ່ແກ່ນນັ້ນແລະເຂົາຈະບໍ່ຈິບຫາຍຈັກເທື່ອ ແລະບໍ່ມີຜູ້ໃດຈະອາດຍາດເຂົາອອກຈາກມືຂອງເຮົາໄດ້.” ໂຢຮັນ 10:27-28

“ແລະຫຼັກຖານນີ້ກໍ່ຄື ວ່າ, ພຣະເຈົ້າໄດ້ຊົງໂຜດປະທານຊີວິດອັນຕະຫຼອດໄປເປັນນິດໃຫ້ແກ່ເຮົາທັ້ງຫຼາຍ ແລະຊີວິດນີ້ແມ່ນຢູ່ໃນພຣະບຸດຂອງພຣະອົງ.” 1ໂຢຮັນ 5:11

ທ່ານຕ້ອງຖິ້ມໃຈເກົ່າ ເອົາໃຈໃໝ່, ຍອມຮັບສາລະພາບວ່າທ່ານເປັນຄົນບາບ. ຖ້າບໍ່ດັ່ງນັ້ນທ່ານກໍ່ບໍ່ສາມາດເຮັດສິ່ງໃດເພື່ອຮັກສາຫຼືຊ່ວຍເຫຼືອຊີວິດຂອງທ່ານເອງໄດ້. ດັ່ງນັ້ນທ່ານຈຶ່ງຕ້ອງການພຣະເຢຊູຄຣິດ

“ເຮົາບອກທ່ານທັ້ງຫຼາຍວ່າ, ບໍ່ແມ່ນດັ່ງນັ້ນດອກ ແຕ່ຖ້າທ່ານທັ້ງຫຼາຍບໍ່ຖິ້ມໃຈເກົ່າເອົາໃຈໃໝ່ ພວກທ່ານກໍ່ຈະຈິບຫາຍໄປເໝືອນກັນ.” ລູກາ13:3

“ໃຫ້ຄົນອະທຳປະຖິ້ມທາງຂອງເຂົາ, ແລະໃຫ້ຄົນບໍ່ຊອບທຳປ່ຽນແນວຄິດຂອງເຂົາ, ແລະໃຫ້ເຂົາກັບມາຫາພຣະເຈົ້າແລະພຣະອົງຈະຊົງເມດຕາເຂົາ. ມາຫາພຣະເຈົ້າເພາະພຣະອົງຈະຊົງອະໄພໃຫ້ຢ່າງລົ້ນເຫຼືອ. ເພາະຄວາມຄິດຂອງເຮົາບໍ່ຄືຄວາມຄິດຂອງເຈົ້າ ທັງວິຖີທາງຂອງເຈົ້າ ກໍ່ບໍ່ເປັນວິຖີທາງຂອງເຮົາ, ພຣະເຈົ້າໄດ້ຊົງກ່າວໄວ້ດັ່ງນີ້.” ເອຊາຢາ55:7-8

“ບໍ່ແມ່ນຍ້ອນກິດຈະການອັນຊອບທຳທີ່ເຮົາເອງໄດ້ເຮັດ ແຕ່ຍ້ອນພຣະມະຫາກະລຸນາຂອງພຣະອົງທີ່ໂຜດຊ່ວຍເຮົາທັ້ງຫຼາຍ.” ຕີໂຕ 3:25

“ແຕ່ສ່ວນຄົນທີ່ບໍ່ໄດ້ອາໄສການປະຕິບັດ ແຕ່ໄດ້ເຊື່ອໃນພຣະອົງຜູ້ຊົງໂຜດຄົນຜິດໃຫ້ເປັນຄົນຊອບທຳ ຄວາມເຊື່ອຂອງຄົນນັ້ນກໍ່ຊົງຖືວ່າເປັນຄວາມຊອບທຳ.” ໂຣມ4:5

ທ່ານຕ້ອງເຊື່ອວາງໃຈ...ມອບທຸກສິ່ງໄວ້ໃນພຣະອົງໂດຍທາງຄວາມເຊື່ອໃນພຣະເຢຊູຄຣິດ ພຣະຜູ້ຊ່ວຍທ່ານ.

“ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວທີ່ເກີດຈາກ